ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

*****************

ສະມາຄົມມິດຕະພາບ
ລາວ - ຍີ່ປຸ່ນ ສູນກາງ

ເລກທີ: 96 / ສມ. ລ-ຍ

# ຂໍ້ຕົກລົງ

## ຂອງປະທານສະມາຄົມມິດຕະພາບ ລາວ-ຍີ່ປຸ່ນ

## ວ່າດ້ວຍການແຕ່ງຕັ້ງ ສະມາຄົມອະດີດນັກສຶກສາລາວຈາກປະເທດຍີ່ປຸ່ນ

---

- ອີງຕາມແຈ້ງການຂອງຫ້ອງວ່າການສູນກາງພັກ ສະບັບເລກທີ 629/ຫສພ, ລົງວັນທີ 5 ທັນວາ 1997 ກ່ຽວກັບການສ້າງຕັ້ງສະມາຄົມມິດຕະພາບ ລາວ-ຍີ່ປຸ່ນ ຢູ່ຂັ້ນແຂວງ ແລະ ກຳແພງນະຄອນວຽງຈັນ.
- ອີງຕາມໃບສະເໜີຂອງສະມາຄົມອາດີດນັກສຶກສາລາວຈາກປະເທດຍີ່ປຸ່ນ ສະບັບລົງວັນທີ 22 ພຶດສະພາ 2003. ວ່າດ້ວຍການແຕ່ງຕັ້ງຄະນະສະມາຄົມອາດີດນັກສຶກສາລາວຈາກປະເທດຍີ່ປຸ່ນ.

## ປະທານສະມາຄົມມິດຕະພາບ ລາວ-ຍີ່ປຸ່ນ ຕົກລົງ:

ມາດຕາ 1. ແຕ່ງຕັ້ງປະທານ, ຮອງປະທານ, ກຳມະການ, ເລຂານຸການ ແລະ ທີ່ປຶກສາ ສະມາຄົມອະດີດນັກສຶກສາລາວຈາກປະເທດ ຍີ່ປຸ່ນ ຊຶ່ງປະກອບດ້ວຍບັນດາທ່ານດັ່ງລຸ່ມນີ້:

| | |
|---|---|
| 1. ທ່ານ ດຣ ພອນແກ້ວ ຈັນທະມາລີ | ຫົວໜ້າພະແນກສົ່ງເສີມການຄົ້ນຄວ້າ ວິທະຍາສາດ ມະຫາວິທະຍາໄລແຫ່ງຊາດ, ເປັນປະທານ. |
| 2. ທ່ານ ສິທັດຖະ ຣາຊະພົນ | ຫົວໜ້າບໍລິສັດທີ່ປຶກສາ ຈຳປາລາວ (ທຸລະກິດສ່ວນຕົວ), ເປັນຮອງປະທານ. |
| 3. ທ່ານ ຄຳມ່ວນ ຊົມສີທາປັນຍາ | ຮອງຜູ້ອຳນວຍການໃຫຍ່ ລັດວິສາຫະກິດໂທລະຄົມລາວ, ເປັນຮອງປະທານ. |
| 4. ທ່ານ ພຸດທາ ເພັດໃບສີ | ພະນັກງານສັງກັດອົງການໄຈກາ (JICA), ເປັນກຳມະການ. |
| 5. ທ່ານ ວັນທາ ແສງເມືອງ | ພະນັກງານວິຊາການກະຊວງການຕ່າງປະເທດ,ເປັນກຳມະການ. |
| 6. ທ່ານ ວັນທອງ ເທບໄກສອນ | ເຮັດທຸລະກິດສ່ວນຕົວ, ເປັນກຳມະການ. |
| 7. ທ່ານ ນາງ ດວງມາລາ ກຸນຊະນະ | ອາຈານສອນທີ່ຄະນະວິສະວະກຳສາດ ມະຫາວິທະຍາໄລແຫ່ງຊາດ, ເປັນເລຂານຸການ. |
| 8. ທ່ານ ນາງ ບົວສອນ ວົງຖາວອນ | ພະນັກງານສັງກັດສະຖານທູດຍີ່ປຸ່ນປະຈຳລາວ, ເປັນເລຂານຸການ. |

9. ທ່ານ ລັງສີ ໄຊວິສິດ — ຫົວໜ້າກົມຊົນລະປະທານ ກະຊວງກະສິກຳ-ປ່າໄມ້, ເປັນທີ່ປຶກສາ.

10. ທ່ານ ດຣ ເກດແກ້ວ ພອງເພັດ — ຮອງຫົວໜ້າພະແນກວິຊາການ ກົມປູກຝັງ ກະຊວງກະສິກຳ-ປ່າໄມ້, ເປັນທີ່ປຶກສາ.

ມາດຕາ 2. ສະມາຄົມອາດີດນັກສຶກສາລາວຈາກປະເທດຍີ່ປຸ່ນ ແມ່ນເປັນສະມາຊິກລວມໝູ່ຂອງສະມາຄົມມິດຕະພາບ ລາວ-ຍີ່ປຸ່ນ ສູນກາງ.

ມາດຕາ 3. ສະເໜີມາຍັງການຈັດຕັ້ງ ພັກ-ລັດ, ເອກະຊົນ ແລະ ຜູ້ທີ່ໄດ້ຮັບການແຕ່ງຕັ້ງ ຈົ່ງຮັບຮູ້ ແລະ ປະຕິບັດຕາມຂໍ້ຕົກລົງສະບັບນີ້ ຈົນກວ່າຈະມີການປ່ຽນແປງ.

ມາດຕາ 4. ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ, ສ່ວນເອກະສານອື່ນໆທີ່ຂັດກັບຂໍ້ຕົກລົງແຕ່ງຕັ້ງສະບັບນີ້ ລ້ວນແຕ່ຖືກລົບລ້າງ.

ວຽງຈັນ, ວັນທີ 30 ພຶດສະພາ 2003

ປະທານສະມາຄົມມິດຕະພາບ

ລາວ - ຍີ່ປຸ່ນ ສູນກາງ

ສະມາຄົມ ມິດຕະພາບ ລາວ-ຍີ່ປຸ່ນ

ດຣ ປອນເມກ ດາລາລອຍ